ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

******************

ກະຊວງການເງິນ

ກົມພາສີ

ເລກທີ 00274/ກພສ

ນະຄອນຫຼວງວຽງຈັນ, ວັນທີ 14 OCT 2015

# ບົດແນະນຳ

## ວ່າດ້ວຍລະບຽບການຄຸ້ມຄອງສິນຄ້ານຳເຂົ້າເພື່ອສົ່ງອອກ

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011, ແລະ ກົດໝາຍວ່າດ້ວຍພາສີ ສະບັບປັບປຸງບາງມາດຕາ ສະບັບເລກທີ 57/ສພຊ, ວັນທີ 24 ທັນວາ 2014.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການຈັດຕັ້ງແລະການເຄື່ອນໄຫວຂອງກົມພາສີ ສະບັບເລກທີ 1765/ກງ, ລົງວັນທີ 03/06/2015.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການເກັບຄ່າທຳນຽມເດັດຖານສຳລັບບາງປະເພດສິນຄ້າ, ເຄື່ອງຂອງນຳເຂົ້າເພື່ອສົ່ງອອກຕໍ່ ສະບັບເລກທີ 0462/ກງ, ລົງວັນທີ 14/06/2003.

ເພື່ອຮັບປະກັນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດການເຮັດສັນຍານຳເຂົ້າເພື່ອສົ່ງອອກສິນຄ້າ, ເຄື່ອງຂອງ ຜ່ານດ່ານພາສີຊາຍແດນ ໃຫ້ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ, ຖືກຕ້ອງຕາມ ກົດໝາຍວ່າດ້ວຍພາສີ, ກົດໝາຍ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ.

## ກົມພາສີ ອອກບົດແນະນຳ :

ມາດຕາ 01. ເງື່ອນໄຂໃນການເຮັດສັນຍານຳເຂົ້າເພື່ອສົ່ງອອກສິນຄ້າ, ເຄື່ອງຂອງ.

ວິສາຫະກິດ ທີ່ສາມາດດຳເນີນທຸລະກິດນຳເຂົ້າເພື່ອສົ່ງອອກສິນຄ້າ, ເຄື່ອງຂອງໄດ້ ຕ້ອງມີທະບຽນວິສາຫະກິດທີ່ສອດຄ່ອງ ຕາມການອະນຸຍາດຂອງຂະແໜງກ່ຽວຂ້ອງ, ຮູບແບບປະເພດ ທຸລະກິດ ຂະແໜງວິຊາຊີບກ່ຽວກັບການຄ້າຂາເຂົ້າ-ຂາອອກ, ການບໍລິການຂົນສົ່ງສິນຄ້າ ຫຼື ຂະແໜງວິຊາຊີບທຸລະກິດ ກ່ຽວກັບກຸ່ມໝວດສິນຄ້າທີ່ສະເໜີຂໍເຮັດສັນຍາ, ມີປະຫັວດການເຄື່ອນໄຫວທີ່ຖືກຕ້ອງ, ມີຖານະການເງິນແລະການປະຕິບັດພັນທະໃຫ້ລັດຢ່າງຄົບຖ້ວນ, ມີລະບົບສາງເກັບມ້ຽນສິນຄ້າທີ່ມີຄວາມປອດໄພ, ມີພາຫະນະຂົນສົ່ງທີ່ໄດ້ມາດຕະຖານ, ບໍ່ມີຄະດີທາງພາສີ ແລະອື່ນໆ.

ສິນຄ້າ, ເຄື່ອງຂອງທີ່ສາມາດນຳເຂົ້າເພື່ອສົ່ງອອກຕໍ່ ຕ້ອງເປັນສິນຄ້າທີ່ມີແຫຼ່ງກຳເນີດ, ມີລະຫັດສິນຄ້າທີ່ຖືກຕ້ອງ, ມີສັນຍາຕາມລາຄາຊື້-ຂາຍຕົວຈິງ, ບໍ່ແມ່ນສິນຄ້າເກືອດຫ້າມ, ບໍ່ແມ່ນສິນຄ້າລະເມີດຊັບສິນທາງປັນຍາ ແລະ ສຳລັບປະເພດສັດຕ້ອງແມ່ນສັດທີ່ບໍ່ນອນໃນບັນຊີຂອງສົນທິສັນຍາສາກົນ CITES.

### ມາດຕາ 02. ຫຼັກການອະນຸຍາດສິນຄ້ານຳເຂົ້າເພື່ອສົ່ງອອກ.

ບັນດາວິສາຫະກິດ ທີ່ມີຈຸດປະສົງ ແລະ ມີເງື່ອນໄຂໃນການສະເໜີຂໍອະນຸຍາດເຮັດສັນຍານຳເຂົ້າເພື່ອສົ່ງອອກສິນຄ້າ, ເຄື່ອງຂອງ, ພາຍຫຼັງທີ່ມີການເຊັນສັນຍາຊື້-ຂາຍທາງການຄ້າຮ່ວມກັນ ແມ່ນໃຫ້ດຳເນີນການຍື່ນເອກະສານສະເໜີ ພ້ອມເອກະສານປະກອບຂໍເຮັດສັນຍາ ລວມສູນຢູ່ຈຸດດຽວທີ່ ກົມພາສີ ກະຊວງການເງິນ.

ການນຳເຂົ້າເພື່ອສົ່ງອອກ ແມ່ນການນຳເອົາສິນຄ້າ, ເຄື່ອງຂອງເຂົ້າມາໃນ ສປປ ລາວ ເພື່ອລໍຖ້າຂະບວນການສົ່ງອອກຕໍ່ ໄປຍັງອີກປະເທດໜຶ່ງ ໂດຍໃຫ້ສຳເລັດຕາມກຳນົດເວລາ ແລະ ຕ້ອງໄປຕາມເສັ້ນທາງສະເພາະ ທີ່ເຈົ້າໜ້າທີ່ພາສີກຳນົດໃຫ້ ເພື່ອຄວບຄຸມການເຄື່ອນຍ້າຍ, ການຜ່ານແດນ ແລະ ການສົ່ງອອກ-ນຳເຂົ້າ ຜ່ານດ່ານພາສີສາກົນ ເທົ່ານັ້ນ.

ລະບົບສາງເກັບມ້ຽນສິນຄ້າ ຕ້ອງຢູ່ພາຍໃຕ້ການຄວບຄຸມຂອງເຈົ້າໜ້າທີ່ພາສີ ແລະ ຕ້ອງມີທີ່ຕັ້ງຢູ່ ດ່ານຊາຍແດນບ່ອນສົ່ງອອກ ຫຼື ຢູ່ສະຖານທີ່ ທີ່ລັດຖະການພາສີ ອະນຸຍາດ ໃຫ້ເທົ່ານັ້ນ.

ການເຮັດສັນຍານຳເຂົ້າເພື່ອສົ່ງອອກສິນຄ້າທຸກຄັ້ງ ແມ່ນໃຫ້ກຳນົດດ່ານນຳເຂົ້າຕົ້ນທາງ, ດ່ານສົ່ງອອກປາຍທາງ (ດ່ານດຽວ), ໃນກໍລະນີຈຳເປັນຕ້ອງການສົ່ງອອກຫຼາຍດ່ານ ກົມພາສີ ຈະພິຈາລະນາອະນຸຍາດໃຫ້ສະເພາະ.

ສິນຄ້າ, ເຄື່ອງຂອງ ທີ່ໄດ້ຮັບອະນຸຍາດໃຫ້ນຳເຂົ້າເພື່ອສົ່ງອອກຕໍ່ ຕ້ອງກຳນົດອາຍຸສັນຍາບໍ່ໃຫ້ເກີນ 01 ເດືອນ ແລະ ຕ້ອງປະຕິບັດພັນທະເສຍຄ່າທຳນຽມ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງ ຂອງລັດຖະມົນຕີ ສະບັບເລກທີ 0462/ກງ, ລົງວັນທີ 14/06/2003.

### ມາດຕາ 03. ຂັ້ນຕອນການເຮັດສັນຍາສິນຄ້ານຳເຂົ້າເພື່ອສົ່ງອອກ.

1. ການປະກອບເອກະສານສະເໜີຂໍເຮັດສັນຍານຳເຂົ້າເພື່ອສົ່ງອອກສິນຄ້າ, ເຄື່ອງຂອງ, ວິສາຫະກິດ ສາມາດຍື່ນເອກະສານປະກອບສະເໜີກ່ອນ 07 ວັນລັດຖະການ, ເພື່ອໃຫ້ ກົມພາສີ ດຳນີນການ ກວດກາຄວາມຖືກຕ້ອງດ້ານເອກະສານ ແລະ ຂໍ້ມູນຕ່າງໆ ໃຫ້ສາມາດຮັບປະກັນໃນການຄົ້ນຄວ້າພິຈາລະນາ ຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນມາດຕາ 01 ຂ້າງເທິງນີ້.
2. ກ່ອນການເຮັດສັນຍາ ກົມພາສີ ຈະມອບໃຫ້ ພະແນກການທີ່ຮັບຜິດຊອບ ປະສານງານກັບ ກອງກວດກາພາສີແຂວງ, ນະຄອນຫຼວງ ແລະ ດ່ານພາສີຊາຍແດນ ເພື່ອກວດກາສະພາບເງື່ອນໄຂຕ່າງໆ ຫຼື ໃຫ້ມີການລົງກວດກາຕົວຈິງທີ່ຕັ້ງລະບົບສາງເກັບມ້ຽນສິນຄ້າຂອງບໍລິສັດ, ສາງຢູ່ຕົ້ນທາງ-ປາຍທາງ ໃຫ້ຢູ່ພາຍໃຕ້ການຄວບຄຸມຂອງເຈົ້າໜ້າທີ່ພາສີ, ສາມາດຮັບປະກັນຕໍ່ການຄຸ້ມຄອງ ແລະ ເກັບມ້ຽນສິນຄ້າ, ເຄື່ອງຂອງທີ່ໄດ້ມາດຕະຖານ ແລະ ເງື່ອນໄຂອື່ນໆ ຕາມທີ່ກຳນົດໄວ້ໃນມາດຕາ 01 ຂ້າງເທິງນີ້, ເພື່ອຢັ້ງຢືນຄັດຕິດເອກະສານປະກອບສະເໜີຂອງ ວິສາຫະກິດ ຕໍ່ ກົມພາສີ ໃນການຄົ້ນຄວ້າ, ກວດກາ ແລະ ພິຈາລະນາແກ້ໄຂ ຕາມລະບຽບການ.
3. ການເຮັດສັນຍາສິນຄ້ານຳເຂົ້າເພື່ອສົ່ງອອກທຸກຄັ້ງ ຕ້ອງຢູ່ພາຍໃນຂອບເຂດ 01 ເດືອນ, ຕ້ອງນຳເຂົ້າ ແລະ ສົ່ງອອກ ໃຫ້ສຳເລັດຕາມກຳນົດເວລາ, ຖ້າບໍ່ສຳເລັດ ຫຼື ປະຕິບັດບໍ່ໄດ້ ດ່ານນຳເຂົ້າ ແລະ ດ່ານສົ່ງອອກຕ້ອງລາຍງານ ກົມພາສີ ເພື່ອມີວິທີການແກ້ໄຂ ຕາມກົດໝາຍ ແລະ ລະບຽບການ.

4. ກ່ອນຈະສະເໜີຂໍເຮັດສັນຍານຳເຂົ້າເພື່ອສົ່ງອອກສະບັບໃໝ່ ຕ້ອງຍື່ນເອກະສານປະກອບສະເໜີກ່ອນ 07 ວັນ ລັດຖະການ, ວິສາຫະກິດ ຕ້ອງສັງລວມບັນຊີສະຫຼຸບການຈັດຕັ້ງປະຕິບັດສັນຍານຳເຂົ້າ-ສົ່ງອອກສິນຄ້າຕົວຈິງ ໂດຍມີການຢັ້ງຢືນ ຂອງດ່ານນຳເຂົ້າ ແລະ ດ່ານສົ່ງອອກ, ຖ້າຫາກບໍ່ມີການສະຫຼຸບສັງລວມການເຄື່ອນໄຫວຄັດຕິດ ໃບສະເໜີຂໍເຮັດສັນຍາໃໝ່ ກົມພາສີ ຈະບໍ່ພິຈາລະນາ ໃນການອະນຸຍາດເຮັດສັນຍາຄັ້ງຕໍ່ໄປ.
5. ເມື່ອສິ້ນສຸດການຈັດຕັ້ງປະຕິບັດສັນຍາທຸກໆເດືອນ ດ່ານນຳເຂົ້າ, ດ່ານສົ່ງອອກ ແລະ ກອງກວດກາພາສີແຂວງ, ນະຄອນຫຼວງ ຕ້ອງສະຫຼຸບສັງລວມສະພາບການປະຕິບັດສັນຍານຳເຂົ້າເພື່ອສົ່ງອອກສິນຄ້າ, ເຄື່ອງຂອງ ສົ່ງລາຍງານ ກົມພາສີ ຕາມລະບຽບການ.

ມາດຕາ 04. ຄວາມຮັບຜິດຊອບ ແລະ ວິທີການປະຕິບັດ.

4.1 ດ່ານພາສີຊາຍແດນ ບ່ອນນຳເຂົ້າ ແລະ ສົ່ງອອກສິນຄ້າ :

ກ. ດ່ານພາສີສາກົນ ບ່ອນນຳເຂົ້າສິນຄ້າ :

- ການແຈ້ງພາສີເປັນລາຍລະອຽດ ຢູ່ທີ່ດ່ານພາສີສາກົນ ບ່ອນນຳເຂົ້າສິນຄ້າ, ໃນເວລາຂົນສົ່ງສິນຄ້ານຳເຂົ້າເພື່ອສົ່ງອອກຕໍ່ ມາຮອດດ່ານບ່ອນນຳເຂົ້າສິນຄ້າ ຕ້ອງເກັບມ້ຽນຢູ່ສາງສິນຄ້າທີ່ຢູ່ພາຍໃຕ້ການຄວບຄຸມຂອງເຈົ້າໜ້າທີ່ພາສີ, ເພື່ອດຳເນີນຂັ້ນຕອນການແຈ້ງພາສີຕາມຫຼັກການການບໍລິຫານຄວາມສ່ຽງ ຜ່ານລະບົບເອເລັກໂຕຣນິກ (ASYCUDA) ແລະ ມອບພັນທະຕ່າງໆຢູ່ດ່ານນຳເຂົ້າຕົ້ນທາງ ແລ້ວຈຶ່ງອະນຸຍາດເຄື່ອນຍ້າຍສິນຄ້າໄປຕາມເສັ້ນທາງທີ່ ລັດຖະການພາສີ ກຳນົດ.
- ການກຳນົດຂໍ້ມູນການແຈ້ງພາສີ ຕ້ອງຈັດເລກລະຫັດສິນຄ້າ ຕາມສາລະບານອັດຕາພາສີ, ກຳນົດມູນຄ່າແຈ້ງພາສີ ແລະ ຂໍ້ມູນອື່ນໆ ໃຫ້ຄົບຖ້ວນ, ຖືກຕ້ອງ ແລະ ສອດຄ່ອງຕາມ ລະບຽບການແຈ້ງພາສີເປັນລາຍລະອຽດ.
- ການກວດປ່ອຍສິນຄ້ານຳເຂົ້າເພື່ອສົ່ງອອກຕໍ່ ເຈົ້າໜ້າທີ່ພາສີ ຕ້ອງນຳໃຊ້ຫຼັກການບໍລິຫານຄວາມສ່ຽງໃນການກວດກາສິນຄ້າຕົວຈິງໂດຍຊ້ອງໜ້າເຈົ້າຂອງສິນຄ້າ, ອາດສາມາດກວດກາທັງໝົດ ຫຼື ບາງສ່ວນຕາມຂໍ້ມູນຄວາມສ່ຽງ, ພ້ອມທັງບັນທຶກຜົນການກວດກາ ( Inspection Act ) ລົງໃນລະບົບການແຈ້ງພາສີແບບເອເລັກໂຕຣນິກ (ASYCUDA) ແລະ ອະນຸຍາດໃຫ້ສິນຄ້າອອກ ຈາກດ່ານພາສີ ຫຼື ສາງສິນຄ້າ ຕາມລະບຽບການ.
- ດ່ານນຳເຂົ້າຕົ້ນທາງ ຕ້ອງປະສານຫາ ກອງກວດກາພາສີແຂວງ, ນະຄອນຫຼວງ ເພື່ອຄຸ້ມຄອງການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງໄປຕາມເສັ້ນທາງສະເພາະ ຈົນເຖິງຈຸດໝາຍດ່ານສົ່ງອອກປາຍທາງ ແລະ ມອບໃຫ້ດ່ານສົ່ງອອກປາຍທາງ, ຄຸ້ມຄອງ ແລະ ດຳເນີນຂັ້ນຕອນການແຈ້ງພາສີ ແລະ ກວດປ່ອຍສິນຄ້າເພື່ອສົ່ງອອກ ຕາມລະບຽບການ.

ຂ. ດ່ານພາສີສາກົນ ບ່ອນສົ່ງອອກສິນຄ້າ :

- ການແຈ້ງພາສີເປັນລາຍລະອຽດ ຢູ່ທີ່ດ່ານພາສີສາກົນ ບ່ອນສົ່ງອອກສິນຄ້າ, ໃນເວລາຂົນສົ່ງສິນຄ້ານຳເຂົ້າເພື່ອສົ່ງອອກຕໍ່ ມາຮອດດ່ານບ່ອນສົ່ງອອກສິນຄ້າ ຜູ່ແຈ້ງພາສີ ຕ້ອງນຳເອົາໃບແຈ້ງພາສີເປັນລາຍລະອຽດ ທີ່ໄດ້ຜ່ານຂັ້ນຕອນການແຈ້ງພາສີຢູ່ທີ່ດ່ານນຳເຂົ້າຕົ້ນທາງ, ແຈ້ງຕໍ່ເຈົ້າໜ້າທີ່ພາສີ ບ່ອນດ່ານສົ່ງອອກປາຍທາງ ເພື່ອດຳ

ເນີນການກວດກາສິນຄ້າຕົວຈິງໂດຍຊ້ອງໜ້າເຈົ້າຂອງສິນຄ້າ, ຕາມຂໍ້ມູນຫຼັກການບໍລິຫານຄວາມສ່ຽງ, ພ້ອມທັງບັນທຶກຜົນການກວດກາ (Inspection Act) ລົງໃນລະບົບການແຈ້ງພາສີແບບເອເລັກໂຕຣນິກ (ASYCUDA) ແລະ ອະນຸຍາດໃຫ້ສົ່ງອອກສິນຄ້າ ຕາມລະບຽບການ.

- ພາຍຫຼັງທີ່ມີການປະກອບໃບແຈ້ງພາສີ ສິນຄ້ານຳເຂົ້າເພື່ອສົ່ງອອກຕໍ່ ແລະ ປະຕິບັດສຳເລັດການກວດປ່ອຍສິນຄ້າສົ່ງອອກ, ດ່ານສົ່ງອອກປາຍທາງ ຕ້ອງເກັບມ້ຽນສຳເນົາ ແລະ ສົ່ງເອກະສານການສົ່ງອອກຕົວຈິງ ໃຫ້ດ່ານນຳເຂົ້າຕົ້ນທາງ ເພື່ອເປັນການຢັ້ງຢືນ, ກວດຄືນ ແລະ ສະສາງລະບອບໃບແຈ້ງພາສີເປັນລາຍລະອຽດ ຕາມລະບຽບການ.

4.2 ກອງກວດກາພາສີແຂວງ, ນະຄອນຫຼວງ :

- ກອງກວດກາພາສີແຂວງ, ນະຄອນຫຼວງ ຕ້ອງກຳນົດສະຖານທີ່ຮັບແຈ້ງເອກະສານໃຫ້ແກ່ຜູ້ປະກອບການໃນການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງ ແລະ ສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ການເຄື່ອນຍ້າຍສິນຄ້າ ຕາມລະບຽບການ.
- ຄຸ້ມຄອງ, ຕິດຕາມ ແລະ ກວດກາການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງ ໄປຕາມເສັ້ນທາງສະເພາະທີ່ລັດຖະການພາສີ ກຳນົດ ຈົນເຖິງຈຸດໝາຍປາຍທາງດ່ານສົ່ງອອກ ຢ່າງເຂັ້ມງວດ.
- ປະສານສົມທົບກັບດ່ານນຳເຂົ້າຕົ້ນທາງ ແລະ ດ່ານສົ່ງອອກປາຍທາງ ເພື່ອຄຸ້ມຄອງລະບົບສາງເກັບມ້ຽນສິນຄ້ານຳເຂົ້າເພື່ອສົ່ງອອກ ໃຫ້ສາມາດຮັບປະກັນການຄຸ້ມຄອງ ແລະ ຢູ່ພາຍໃຕ້ການຄວບຄຸມຂອງເຈົ້າໜ້າທີ່ພາສີຕາມກົດໝາຍ ແລະ ລະບຽບການກຳນົດ.
- ສະຫຼຸບສັງລວມການຈັດຕັ້ງປະຕິບັດ, ການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ການຮັບແຈ້ງເອກະສານການເຄື່ອນຍ້າຍສິນຄ້ານຳເຂົ້າເພື່ອສົ່ງອອກ ປະຈຳເດືອນ ສົ່ງໃຫ້ ກົມພາສີ ຕາມລະບຽບການ.

ມາດຕາ 05. ມາດຕະການ

- ເຈົ້າໜ້າທີ່ພາສີ ຕ້ອງຄຸ້ມຄອງລະບົບສາງເກັບມ້ຽນສິນຄ້າ ແລະ ກວດກາສິນຄ້າ, ເຄື່ອງຂອງທີ່ເຮັດສັນຍານຳເຂົ້າເພື່ອສົ່ງອອກຕໍ່ ຕາມກົດໝາຍ ແລະ ລະບຽບການກຳນົດ.
- ຫ້າມນຳເອົາສິນຄ້າ, ເຄື່ອງຂອງທີ່ໄດ້ກຳນົດໃນສັນຍານຳເຂົ້າເພື່ອສົ່ງອອກຕໍ່ ມາຈຳໜ່າຍພາຍໃນປະເທດ ຫຼື ນຳໄປໝູນໃຊ້ໃນທາງທີ່ບໍ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ.
- ຫ້າມນຳເອົາສິນຄ້າ, ເຄື່ອງຂອງ ອອກຈາກດ່ານພາສີ ຫຼື ສາງສິນຄ້າ ໂດຍທີ່ບໍ່ໄດ້ຮັບອະນຸຍາດຈາກ ເຈົ້າໜ້າທີ່ພາສີ.
- ກໍລະນີລະເມີດລະບຽບກົດໝາຍວ່າດ້ວຍພາສີ ແລະ ບໍ່ປະຕິບັດຕາມລະບຽບການຄຸ້ມຄອງສິນຄ້ານຳເຂົ້າເພື່ອສົ່ງອອກ ໂດຍມີເຈດຕະນາລັກລອບໜີພາສີ, ວິສາຫະກິດ ຕ້ອງຮັບຜິດຊອບຕໍ່ໜ້າກົດໝາຍ, ຕ້ອງໄດ້ເສຍພາສີ ແລະ ພັນທະອື່ນ ພ້ອມທັງຖືກປັບໃໝ ຕາມແຕ່ລະກໍລະນີເບົາ ຫຼື ໜັກ ຕາມກົດໝາຍວ່າດ້ວຍພາສີ ກຳນົດ.

ມາດຕາ 06. ການຈັດຕັ້ງປະຕິບັດ

ມອບໃຫ້ ພະແນກລະບຽບການແລະຂັ້ນຕອນການແຈ້ງພາສີ ເປັນເສນາທິການໃຫ້ ກົມພາສີ ໃນການຄຸ້ມຄອງກ່ຽວກັບວຽກງານວິຊາສະເພາະ ສິນຄ້ານຳເຂົ້າເພື່ອສົ່ງອອກຕໍ່ ຕາມລະບຽບການ.

ມອບໃຫ້ພະແນກການອ້ອມຂ້າງກົມພາສີ, ດ່ານພາສີຊາຍແດນ, ກອງກວດກາພາສີແຂວງ, ນະຄອນຫຼວງ, ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດ ບົດແນະນຳສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 07. ຜົນສັກສິດ

ບົດແນະນຳສະບັບນີ້ ປ່ຽນແທນ ບົດແນະນຳ ເລກທີ 1130/ກພສ, ລົງວັນທີ 22/05/2007, ແລະ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າກົມພາສີ

ສະພັງທອງ ສີພັນ[illegible]

[illegible]phangthong SIPH[illegible]